# ມອບ-ຮັບ ຕໍາແໜ່ງຫົວໜ້າທະນາຄານແຫ່ງ ສປປ ລາວ ສາຂາພາກໃຕ້ຜູ້ເກົ່າ-ຜູ້ໃໝ່

ອີງຕາມກົດໝາຍ ແຫ່ງ ສປປ ລາວ ວ່າດ້ວຍລັດຖະບານ, ອີງຕາມການສະເໜີຂອງຄະນະຈັດຕັ້ງສູນກາງພັກ ແລະ ອີງໃສ່ຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານຢູ່ທະນາຄານແຫ່ງ ສປປ ລາວ, ນາຍົກລັດຖະມົນຕີ ຈຶ່ງໄດ້ອອກຄໍາສັ່ງຍົກຍ້າຍ ທ່ານ ຄໍາໝັ້ນ ພັນທະລາ ຫົວໜ້າທະນາຄານແຫ່ງ ສປປ ລາວ ພາກໃຕ້ທີ່ແຂວງຈໍາປາສັກຜູ້ເກົ່າ ໄປຮັບໜ້າທີ່ໃໝ່ຢູ່ທະນາຄານແຫ່ງ ສປປ ລາວ ແລະ ອອກຄໍາສັ່ງແຕ່ງຕັ້ງ ທ່ານ ນະ ຈັນຕະລີວົງ ຈາກທະນາຄານແຫ່ງ ສປປ ລາວ ມາເປັນຫົວໜ້າທະນາຄານແຫ່ງ ສປປ ລາວ ພາກໃຕ້ທີ່ແຂວງຈໍາປາສັກຜູ້ໃໝ່, ຊຶ່ງພິທີມອບຮັບຕໍາແໜ່ງດັ່ງກ່າວໄດ້ຈັດຂຶ້ນໃນອາທິດຜ່ານມານີ້ຢູ່ທະນາຄານ ແຫ່ງ ສປປ ລາວ ພາກໃຕ້ທີ່ແຂວງຈໍາປາສັກ.

ທ່ານ ພູເພັດ ຄໍາພູນວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ທ່ານ ສົມ ສະໜິດ ບຸດຕິວົງ ຮອງເຈົ້າແຂວງຈໍາປາສັກ ໄດ້ເຂົ້າຮ່ວມເປັນສັກຂີພິຍານໃນພິທີດັ່ງກ່າວ, ນອກຈາກນີ້ຍັງໄດ້ຜ່ານຂໍ້ຕົກລົງແຕ່ງຕັ້ງ ທ່ານ ປອງຄໍາ ຈໍາປາແດງ ຫົວໜ້າສົ່ງເສີມທະນາຄານສົ່ງເສີມກະສິກໍາແຂວງສາລະວັນມາເປັນຮອງຫົວໜ້າທະນາຄານແຫ່ງ ສປປ ລາວ ພາກໃຕ້ຕື່ມອີກ.

ອ້າງອີງຈາກໜັງສືພິມປະເທດລາວ, ສະບັບວັນທີ 24 ກຸມພາ 2010